# ແຜນງານສະໜັບສະໜູນ ການຫຼຸດຜ່ອນຄວາມທຸກຍາກ (PRSO)



ເຄື່ອງມືຊ່ວຍໃນການປະຕິຮູບນະໂຍບາຍດ້ານເສດຖະກິດ ແລະ ດ້ານອົງກອນ ໃນໜ່ວຍງານຕ່າງໆຂອງ ລັດຖະບານແຫ່ງ ສປປ ລາວ ໂດຍນຳໃຊ້ວິທີການຕິດຕາມຜົນງານໃນການປະຕິຮູບ























Australian AID

THE WORLD BANK

## ແຜນງານສະໜັບສະໜູນ ການຫຼຸດຜ່ອນຄວາມທຸກຍາກ (PRSO) ແມ່ນຫຍັງ?

ແຜນງານນີ້ແມ່ນການສະໜອງທຶນເພື່ອດຸ່ນດ່ຽງງົບປະມານຂອງລັດຖະບານ, ເຊິ່ງມີຈຸດປະສົງເພື່ອຊ່ວຍຊຸກຍູ້ການຄຸ້ມຄອງເສດຖະກິດມະຫາພາກ ໂດຍການນຳໃຊ້ ວິທີການນຕິດຕາມ ຜົນງານນການປະຕິຮູບ. ແຜນງານ ດັ່ງກ່າວ ໄດ້ຊ່ວຍເສີມສ້າງຄວາມສອດຄ່ອງລະຫວ່າງຍຸດທະສາດການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ7 ຂອງ ສປປ ລາວ. ພ້ອມກັນນັ້ນ ແຜນງານດັ່ງກ່າວ ຍັງຊ່ວຍໃຫ້ພວກເຮົາເຫັນໄດ້ ກ່ຽວກັບຄວາມຄືບໜ້າຂອງ ລັດຖະບານ ໃນວຽກງານການປະຕິຮູບນະໂຍບາຍ ດ້ານເສດຖະກິດ ແລະ ດ້ານອົງກອນໃນຫຼາຍຂະແໜງການ.

## ມີແຜນງານນີ້ຍ້ອນຫຍັງ?

PRSO ມີຄວາມສຳຄັນຕໍ່ການພັດທະນາໃນ ສປປ ລາວ ເນື່ອງຈາກວ່າແຜນງານດັ່ງກ່າວສະໜັບສະໜູນວຽກງານການ ປະຕິຮູບໄລຍະກາງທີ່ມີລັດຖະບານເປັນເຈົ້າການ, ເຊິ່ງກໍ່ໄດ້ຕິດພັນກັບການຊ່ວຍເຫຼືອແບບ ໂຄງການ ແລະການຊ່ວຍເຫຼືອທາງດ້ານວິຊາການອື່ນໆ. ການສະໜອງທຶນຊ່ວຍເຫຼືອແມ່ນອີງໃສ່ຜົນງານດ້ານການ ປະຕິຮູບ ທີ່ມີການປະເມີນຮ່ວມກັນ ລະຫວ່າງລັດຖະບານ ແລະຄູ່ຮ່ວມພັດທະນາ. ແຜນງານນີ້ສະໜອງທຶນໂດຍກົງເຂົ້າງົບປະມານລັດ ເພື່ອດຸ່ນດ່ຽງງົບປະມານລັດກັບລາຍຈ່າຍທີ່ເປັນບູລິມະສິດ ພາຍໃຕ້ແຜນພັດທະນາ ເສດຖະກິດ-ສັງຄົມ. ກົນໄກດັ່ງກ່າວ ຊ່ວຍເສີມສ້າງຄວາມເຂັ້ມແຂງໃຫ້ລັດຖະບານຈາກພາຍໃນ ແລະ ສ້າງຄວາມອາດສາມາດໃນໄລຍະຍາວ. ກົນໄກດັ່ງກ່າວເຮັດວຽກຄືກັບກົນໄກການນຳໃຊ້ຊັບພະຍາກອນພາຍໃນຂອງລັດຖະບານ ຕາມຮອບວຽນງົບປະມານ.

## ຂອບເວລາ?

PRSO ແມ່ນຊຸດແຜນງານທີ່ປະກອບດ້ວຍຫຼາຍ ແຜນງານປະຈຳປີ ເຊິ່ງການສະໜອງງົບປະມານ ແມ່ນເກີດຂຶ້ນ ພາຍຫຼັງຜົນງານດ້ານການປະຕິຮູບ ທີ່ໄດ້ກຳນົດໄວ້ ໃນແຕ່ລະປີ ໄດ້ຮັບຜົນສຳເລັດ. ແຜນງານທຳອິດແມ່ນໄດ້ເກີດຂຶ້ນໃນປີ 2005. ຫຼັງຈາກນັ້ນເປັນຕົ້ນມາແຜນງານດັ່ງກ່າວ ກໍໄດ້ຮັບການພັດທະນາ ແລະ ກວມເອົາການປະຕິຮູບທາງດ້ານນະໂຍບາຍ ແລະ ດ້ານອົງກອນ ໃນຂອບເຂດທີ່ກວ້າງຂຶ້ນກວ່າເກົ່າ. ປະຈຸບັນ ທາງລັດຖະບານ ແລະ ຄູ່ຮ່ວມພັດທະນາ ໄດ້ເລີ່ມກະກຽມແຜນງານຊຸດທີ 3 ສຳລັບປີ 2011-2015 ໃນເດືອນກັນຍາ 2011 ເຊິ່ງເນື້ອໃນແມ່ນສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ7 2011-2015. PRSO ໄລຍະ 8 ແມ່ນແຜນງານປະຈຳປີທຳອິດຂອງຊຸດທີ 3 (ເຊິ່ງແມ່ນແຜນງານທີ 8 ຕັ້ງແຕ່ເລີ່ມຕົ້ນມາ) ແມ່ນກຳລັງໄດ້ຮັບການກະກຽມ ໃນສົກງົບປະມານ 2011/2012.

## ແມ່ນໃຜແດ່ເຂົ້າຮ່ວມໃນແຜນງານດັ່ງກ່າວ?

PRSO ແມ່ນແຜນງານທີ່ເປີດກ້ວາງ ໂດຍເຫັນໄດ້ຄວາມສຳຄັນ ແລະ ຄວາມພ້ອມທີ່ຈະຕ້ອນຮັບ ຄູ່ຮ່ວມງານໃໝ່. PRSO ໄດ້ຮັບຜົນປະໂຫຍດເປັນຢ່າງສູງຍ້ອນ ຄວາມເປັນເຈົ້າການ ຂອງລັດຖະບານແຫ່ງ ສປປ ລາວ. ແຜນງານດັ່ງກ່າວ ໄດ້ສ້າງເວທີແຫ່ງການປຶກສາຫາລື ໄດ້ຫຼາຍກວ່າ 10 ໜ່ວຍງານຂອງລັດຖະບານ ທີ່ຢູ່ໃນຄະນະຊີ້ນຳຂອງ PRSO ໂດຍແມ່ນ ກະຊວງການເງິນ ເປັນຕົວຫຼັກ.

PRSO ແມ່ນແຜນງານທີ່ລັດຖະບານ ເປັນຜູ້ຊີ້ນຳ ໂດຍການຮ່ວມມືກັບທະນາຄານໂລກ, AusAID, ຄະນະກຳມະທິການເອີຣົບ ແລະ ລັດຖະບານຍີ່ປຸ່ນເຊິ່ງໄດ້ສະໜອງ ການຊ່ວຍເຫຼືອທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດແຜນງານ. ຄຽງຄູ່ກັນນັ້ນ ກໍແມ່ນການສະໜອງ ທາງດ້ານການເງິນ ທີ່ມີຄວາມສາມາດ ປັບຕົວຕາມຄວາມ ເໝາະສົມ ເພື່ອສົ່ງເສີມການສ້າງຄູ່ຮ່ວມງານ, ເຮັດໃຫ້ກອບການປະຕິຮູບກັບລັດຖະບານ ມີຄວາມສອດຄ່ອງຫຼາຍຂຶ້ນກວ່າເກົ່າ, ໃນຂະນະທີ່ຄູ່ຮ່ວມງານສາມາດປະຕິບັດຕາມລະບຽບການໃນການເບີກຈ່າຍຂອງຕົນ. PRSO ໄດ້ສ້າງຂຶ້ນໂດຍການຮ່ວມມືລະຫວ່າງລັດຖະບານກັບຄູ່ຮ່ວມພັດທະນາ ທີ່ກວມເອົາຫຼາຍຂະແໜງການ ນັບຕັ້ງແຕ່ນະໂຍບາຍ ແລະ ການວາງແຜນງານເສດຖະກິດ, ຂະແໜງເອກະຊົນ ແລະ ການພັດທະນາທາງດ້ານການຄ້າ, ການຄຸ້ມຄອງການເງິນພາກລັດ, ລັດຖະກອນ, ການກວດສອບແຫ່ງລັດ, ສາທາ ແລະ ສຶກສາ, ການຄຸ້ມຄອງຊັບພະຍາກອນທຳມະຊາດ, ການຄຸ້ມຄອງການເງິນມະຫາພາກ ແລະ ງົບປະມານ, ສະຖິຕິ ແລະ ອື່ນໆ.

## ມີການຈັດຕັ້ງປະຕິບັດແນວໃດ?

PRSO ໄດ້ສ້າງຖານອັນແຂງແກ່ນໃຫ້ແກ່ລັດຖະບານ ໃນການປະສານງານ ແລະ ການຮ່ວມມືລະຫວ່າງ ໜ່ວຍງານຕ່າງໆ ຂອງລັດຖະບານ ແລະ ລະຫວ່າງ ລັດຖະບານກັບຄູ່ຮ່ວມພັດທະນາ, ເຊິ່ງໄດ້ກາຍເປັນການສ້າງຄວາມສອດຄ່ອງ ລະຫວ່າງຄູ່ຮ່ວມພັດທະນາເພື່ອສະໜັບສະໜູນເປົ້າໝາຍການປະຕິຮູບຂອງລັດຖະບານ. ໃນແຕ່ລະປີ, ລັດຖະບານ ແລະ ຄູ່ຮ່ວມພັດທະນາໄດ້ພ້ອມກັນປຶກສາຫາລື ຄວາມຄືບໜ້າຕໍ່ເປົ້າໝາຍຮ່ວມກັນ ເພື່ອການປະຕິຮູບ ແລະ ສ້າງຄວາມສະຖຽນລະພາບທາງດ້ານກອບນະໂຍບາຍເສດຖະກິດມະຫາພາກ, ເຊິ່ງເປັນສິ່ງຈຳເປັນທີ່ຈະຕ້ອງໄດ້ເຮັດ ກ່ອນມີການສະໜອງທຶນເພື່ອດຸ່ນດ່ຽງງົບປະມານ. PRSO ຈະສະໜອງທຶນເພື່ອດຸ່ນດ່ຽງງົບປະມານ ຫຼັງຈາກໄດ້ມີການຈັດຕັ້ງປະຕິບັດ ການປະຕິຮູບຕາມທີ່ໄດ້ຕົກລົງກັນ. ແຜນງານນີ້ແມ່ນສອດຄ່ອງກັນຕາມຮອບວຽນງົບປະມານຂອງລັດຖະບານ ແລະ ເປັນໄປຕາມຄວາມຄາດການໄວ້. ມັນເປັນເຄື່ອງມື ສຳລັບລັດຖະບານ ແລະ ຄູ່ຮ່ວມພັດທະນາ ເພື່ອສ້າງຄວາມສອດຄ່ອງ ແລະ ການຕິດຕາມຜົນງານ. ມັນຍັງເປັນການເຕົ້າໂຮມເອົາບັນດາວຽກງານຄົ້ນຄ້ວາ, ການຊ່ວຍເຫຼືອທາງດ້ານວິຊາການ ແລະ ໂຄງການຕ່າງໆ ຍອນວ່າແຜນງານດັ່ງກ່າວມີຄວາມເຂັ້ມແຂງໃນການນຳເອົາການປຶກສາຫາລືໃຫ້ກ້າວໄປສູ່ລະດັບສູງ ແລະ ໃນການແກ້ໄຂບັນດາຂໍ້ຫຍຸ້ງຍາກຕ່າງໆ ລະຫວ່າງຂະແໜງການ.

## PRSO ມີຄວາມສຳຄັນແນວໃດ?

PRSO ໄດ້ປະກອບສ່ວນອັນໃຫຍ່ຫຼວງໃນການຊຸກຍູ້ໃຫ້ມີການປ່ຽນແປງທາງດ້ານນະໂຍບາຍ ແລະ ໃນສະຖາບັນ, ພ້ອມກັນນັ້ນກໍຍັງໄດ້ສ້າງທິດທາງໃນການຄຸ້ມຄອງການເງິນພາກລັດໃຫ້ມີຄວາມໂປ່ງໃສເພື່ອໃຫ້ສາມາດສະໜອງການ ບໍລິການຕ່າງໆ ຂອງພາກລັດ, ເພື່ອປັບປຸງການລົງທຶນ, ການຄ້າ ແລະ ສະພາບແວດລ້ອມຂອງການລົງທຶນໂດຍລວມ, ເພື່ອປະກອບສ່ວນໃຫ້ແກ່ນະໂຍບາຍ ແລະ ສະຖາບັນ ໃນການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ. ໂດຍການ ສະໜັບສະໜູນການປະຕິຮູບທາງດ້ານນະໂຍບາຍ ແລະ ສະຖາບັນ ຈາກພາຍໃນລັດຖະບານ, PRSO ໄດ້ປະກອບສ່ວນຕໍ່ການເຕີບໂຕທາງດ້ານເສດຖະກິດ ທີ່ຍືນຍົງ ແລະ ມີສ່ວນຮ່ວມ.



## ຕິດຕໍ່:

ສໍາລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່
ເຈນເນີວີ ບອຍໂຣ, ນັກເສດຖະສາດ ອາວຸໂສ, ສປປ ລາວ
ອີແມວ: gboyreau@worldbank.org
ໂທລະສັບ: (856 20) 2222 1309

THE WORLD BANK

**ຫ້ອງການ ທະນາຄານໂລກ ປະຈໍາ ສປປ ລາວ**
ປະຕູໄຊ ຖະໜົນ ເນຣູ
ຕູ້ ປ.ນ 345
ວຽງຈັນ, ສປປ ລາວ
ໂທລະສັບ: (856 21) 414 209, 450 010
ແຟກສ໌: (856 21) 414 210
ເວັບໄຊ໌: www.worldbank.org/lao

**ທະນາຄານໂລກ**
1818 H street, NW
Washington, D.C. 20433, USA
ໂທລະສັບ: (202) 473 1000
ແຟກສ໌: (202) 477 6391
ເວັບໄຊ໌: www.worldbank.org